ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 24 ຫາ 28 ເມສາ 2023



ການກະກຽມຄວາມພ້ອມໃນວຽກງານການສົ່ງສັດໃຫຍ່ໄປ ສປ ຈີນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ການກະກຽມຄວາມພ້ອມໃນວຽກງານ ການສົ່ງສັດໃຫຍ່ໄປ ສປ ຈີນ

ໃນລະຫວ່າງ ວັນທີ 28 ເມສາ ຫາ 5 ພຶດສະພາ 2021 ສປປ ລາວ ສາມາດສົ່ງອອກສັດໃຫຍ່ງົວ, ຄວາຍເປັນຄັ້ງທຳອິດ ໄປ ຍັງ ສປ ຈີນ ທັງໝົດ 2.013 ໂຕ ຂອງຈຳນວນໂກຕ້າ 3.000 ໂຕ ທີ່ກົມໃຫຍ່ພາສີ ສປ ຈີນ ອະນຸມັດໃຫ້ ຄັ້ງທີ 1 ແຕ່ຍ້ອນເກີດການລະບາດພະຍາດ ທີ່ມີຊື່ວ່າພະຍາດຜິວໜັງອັກເສບຕິດຕໍ່ງົວຄວາຍ (Lumpy Skin disease, LSD) ໃນທ້າຍເດືອນ ພຶດສະພາ 2021, ໃນວັນທີ 15 ກໍລະກົດ 2021 ກົມໃຫຍ່ພາສີ ແລະ ກະຊວງກະສິກຳ ແລະ ຊົນນະບົດ ຂອງ ສປ ຈີນ ໄດ້ອອກປະກາດໂຈະການນຳເຂົ້າສັດໃຫຍ່ ແລະ ຜະລິດຕະພັນສັດໃຫຍ່ປະເພດງົວ. ຜ່ານຈາກການຄວບຄຸມການລະບາດຂອງພະຍາດ LSD ແລະ ການປະສານງານຢ່າງເປັນປົກກະຕິ ຂອງຄະນະວິຊາການ, ມາຮອດ ວັນທີ 29 ເມສາ 2022 ຈຶ່ງໄດ້ມີປະກາດຍົກເລີກ ແຈ້ງການດັ່ງກ່າວ ໝາຍຄວາມວ່າ ປັດຈຸບັນ ສປ ຈີນ ແມ່ນເຫັນດີອະນຸຍາດໃຫ້ນຳເຂົ້າ ງົວ-ຄວາຍ ຈາກ ສປປ ລາວ ໄປ ສປ ຈີນ.

ເພື່ອກະກຽມຄວາມພ້ອມໃນດ້ານຕ່າງໆຂະແໜງການກໍໄດ້ສຸມໃສ່ກະກຽມ ທາງດ້ານນິຕິກຳ ແລະ ບັນດາຄູ່ມື ປະຕິບັດງານ, ມາດຕະຖານ ແລະ ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນໍ້າ ທີ່ກວມເອົາ 8 ນະໂຍບາຍ, ຈັດສົ່ງພະນັກງານວິຊາການຈາກກົມ, ແຂວງ ແລະ ເມືອງ ເພື່ອໄປປະຈຳຢູ່ເຂດທ້ອນໂຮມສັດ ແລະ ເຂດປອດພະຍາດສັດທີ່ເມືອງ ສິງ ແຂວງ ຫຼວງນໍ້າທາ, ສຸມໃສ່ການສັກຢາກັນພະຍາດສັດໃຫ້ປະຊາຊົນໃນເຂດກັນຊົນ 22 ບ້ານ ພ້ອມທັງ ສັງລວມບັນດາຂໍ້ມູນກ່ຽວກັບສັດຍາມຢູ່ໃນເຂດກັນຊົນ,ສັງລວມບັນດາຟາມເພື່ອເຂົ້າຮ່ວມໂຄງການສົ່ງງົວອອກໄດ້ແລ້ວ 143 ຟາມ ເຊິ່ງມີງົວທັງໝົດ 41.560 ກວ່າໂຕ, ສຸມໃສ່ຈັດກອງປະຊຸມກັບຜູ້ປະກອບການທີ່ດຳເນີນການກ່ຽວສະຖານທີ່ກັກກັນສັດ, ການບໍລິການດ້ານສັດຕະວະແພດ ແລະ ຜູ້ປະກອບການຟາມລ້ຽງສັດໃນທົ່ວປະເທດ ເພື່ອບັນລຸໄດ້ດ້ານກົນໄກ ແລະ ລາຄາ ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.



ເນື່ອງຈາກສະພາບການລະບາດຂອງພະຍາດຜິວໜັງອັກເສບຕິດຕໍ່ ງົວ-ຄວາຍ ແລະ ການກວດກໍລະນີເກີດພົບພະຍາດງົວບ້າ ຢູ່ ເຂດອາເມລິກາກາງ ແລະ ຢູໂຣບ, ກົມໃຫຍ່ພາສີ ຈຶ່ງສະເໜີໃຫ້ປັບປຸງຂໍ້ກຳນົດເງື່ອນໄຂສະບັບເກົ່າໂດຍການກຳນົດເອົາການສັກຢາກັນພະຍາດ LSD ແລະ ມາດຕະການປ້ອງກັນພະຍາດງົວບ້າ ເຂົ້າຕື່ມ ຊຶ່ງ ຂໍ້ກຳນົດເງື່ອນໄຂ ສະບັບປັບໃໝ່ ນີ້ ໄດ້ລົງນາມຮ່ວມກັນວັນທີ 29 ພະຈິກ 2022 ໂດຍກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ ແລະ ອົງການບໍລິຫານພາສີແຫ່ງ ສປ ຈີນ. ສັນຍາ ກ່ຽວກັບການກັກກັນ ແລະ ມາດຕະຖານດ້ານສຸຂະພາບສັດ ຂອງສະບັບປັບປຸງໄດ້ກຳນົດເງື່ອນໄຂສຳຄັນຫຼາຍດ້ານເຊັ່ນ:

1. ງົວ ແລະ ຄວາຍທີ່ຈະສົ່ງອອກ ໄປ ສປ ຈີນ ຕ້ອງເປັນ ພັນຊີ້ນ ອາຍຸບໍ່ເກີນ 4 ປີ; ເກີດຢູ່ ສປປ ລາວ ຫຼື ປະເທດ ທີ່ ສປ ຈີນ ຮັບຮອງ ແຕ່ຕ້ອງໄດ້ລ້ຽງຢູ່ ສປປ ລາວ;

2. ຕ້ອງໄດ້ຮັບການກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດ ຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດ ຂັ້ນສູນກາງ ຂອງ ສປປ ລາວ.

3. ສັດໃຫຍ່ແຕ່ລະໂຕ ຕ້ອງໄດ້ກວດການຕິດນໍ້າເບີລະຫັດປະຈຳຕົວ, ເປັນລະຫັດທີ່ທັງສອງຝ່າຍຮັບຮູ້ ແລະ ເພດແມ່ຕ້ອງບໍ່ຖືພາມານ.

4. ສັດໃຫຍ່ທີ່ມີເປົ້າໝາຍສົ່ງອອກຕ້ອງຂົນສົ່ງມາເຂດທ້ອນໂຮມສັດ ທີ່ຕັ້ງຢູ່ໃນລັດສະໝີລະ ຫວ່າງ 3-50 ກິໂລແມັດ ອ້ອມຮອບເຂດປອດພະຍາດປາກເປື່ອຍລົງເລັບ, ເຊິ່ງໃນເຂດດັ່ງກ່າວຕ້ອງມີການແຍກເພດສັດລ້ຽງ, ພາຍໃນ 6 ເດືອນ ຕ້ອງກວດບໍ່ພົບເຊື້ອພະຍາດຮ້າຍແຮງຕາມທີ່ ສປ ຈີນ ກຳນົດ ຄື: 1) ພະຍາດຜິວໜັງອັກເສບຕິດແປດ; 2) ພະຍາດປອດອັກເສບຕິດແປດງົວ,ຄວາຍ; 3) ພະຍາດ ງົວບ້າ; 4) ພະຍາດປາກເປື່ອຍລົງເລັບ; 5) ພະຍາດແທ້ງລູກຕິດຕໍ່ງົວຄວາຍ; 6) ພະຍາດວັນນະໂລກ ງົວ, ຄວາຍ; 7) ພະຍາດໄຂ້ເລືອດດຳ ແລະ 8) ພະຍາດ ອະຫິວາສັດຄ້ຽວເອື້ອງນ້ອຍ.



5. ສັດລ້ຽງໃນເຂດທ້ອນໂຮມຕ້ອງມີລະບົບການຄຸ້ມຄອງຂອງພາກລັດ: ຂຶ້ນທະບຽນພິມສັດ, ກວດການຖືພານາມ, ມີການສັກຢາກັນພະຍາດປາກເປື່ອຍລີ້ງເລັບ 2 ເຂັມ, ຕິດຕາມ ແລະ ກວດກາສັດເປັນປະຈໍາ, ເກັບຕົວຢ່າງ ແລະ ວິໄຈພະຍາດ, ຕິດຕາມການນໍາໃຊ້ອາຫານ ແລະ ຢາປົ່ນປົວ, ມີການຄວບຄຸມການເຄື່ອນຍ້າຍ ແລະ ຂົນສົ່ງ ລວມທັງ ມີການນໍາໃຊ້ມາດຕະການດ້ານວິຊາການອື່ນເພື່ອກໍາຈັດ ແລະ ຄວບຄຸມພະຍາດ ທີ່ສອດຄ່ອງກັບມາດຕະ ຖານສາກົນ;

6. ສັດໃຫຍ່ທີ່ຈະສົ່ງອອກຕ້ອງບໍ່ນໍາໃຊ້ ຢາສັດຕະວະແພດໃດໆ ທີ່ບໍ່ໄດ້ຮັບອະນຸຍາດຈາກຝ່າຍລາວ ແລະ ຕ້ອງສອດຄ່ອງກັບມາດຕະຖານທີ່ກ່ຽວຂ້ອງ ຂອງ ສປ ຈີນ, ສານຕົກຄ້າງຂອງຢາສັດຕະວະແພດຕ້ອງຢູ່ໃນລະດັບທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ຕ້ອງບໍ່ນໍາໃຊ້ຮອກໂມນກະຕຸ້ນການຈະເລີນເຕີບໂຕ HPGF.

7. ສັດໃຫຍ່ທີ່ຈະສົ່ງອອກ ຫຼັງຈາກຜ່ານເຂດທ້ອນໂຮມສັດ ຈໍານວນ 45 ວັນ, ກ່ອນການສົ່ງອອກຕ້ອງຖືກກັກກັນຢູ່ຟາມກັກກັນທີ່ຕັ້ງຢູ່ໃນບໍລິເວນເຂດປອດພະຍາດປາກເປື່ອຍລີ້ງເລັບທີ່ທັງ ສອງປະເທດຮອງຮັບຮອງ ຢ່າງໜ້ອຍ 30 ວັນ. ປັດຈຸບັນມີ 2 ຟາມກັກກັນສັດ ຢູ່ໃນເຂດປອດພະຍາດປາກເປື່ອຍລີ້ງເລັບ ຄື1) ຟາມກັກກັນສັດ ຂອງ ບໍລິສັດ ສິບສອງປັນນາເຢທີ້ງ ການຄ້າ ຈໍາກັດ ມີຄວາມສາມາດກັກກັນງົວ,ຄວາຍ ໄດ້ 18.000 ໂຕຕໍ່ຊຸດ ປະມານ 140.000 ໂຕຕໍ່ປີ;ແລະ 2) ຟາມກັກກັນສັດ ຂອງ ບໍລິສັດ ລາວໂກທີ້ງ ພັດທະນາກິດຈະການລ້ຽງສັດ ຈໍາກັດ ພື້ນທີ່ສາມາດກັກກັນງົວໄດ້ 5.720 ໂຕ ຕໍ່ຊຸດ ຫຼື ປະມານ 45.000 ໂຕຕໍ່ປີ.


ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;